# ຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນຕໍ່ຜົນການດຳເນີນງານຂອງວິສະຫາກິການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ

ວິຊຸນ ແກ້ວຄຳພຸຍ[1], ແສງສຸລິຍາ ຈັນທະນາຄອນ[2], ພອນສັກ ໂສພາ[3], ອຸດຕະຄອນ ສິງທອງ[4]

*ນັກສຶກສາປະລິນຍາໂທ ສາຂາການພັດທະນາຊຸມຊົນ ແບບຍືນຍົງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລ ຈຳປາສັກ*

## ບົດຄັດຫຍໍ້

ການສຶກສາຄົ້ນຄວ້ານີ້ແມ່ນມີຈຸດປະສົງຫຼັກເພື່ອສຶກສາເຖິງປັດໄຈທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງທຶນຂອງວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ. ເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາແມ່ນໃຊ້ແບບສອບຖາມເປັນເຄື່ອງມືໃນການເກັບກຳ ແລະ ລວບລວມຂໍ້ມູນຈາກການສຳພາດເຈົ້າຂອງກິດຈະການຫົວໜ່ວຍວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍ ໃນແຂວງຈຳປາສັກຈຳນວນ 225 ຫົວຫນ່ວຍໃນປີ 2023 ໂດຍນຳໃຊ້ວິການສຸ່ມແບບບັງເອີນ (Accidental Sampling). ໃນການວິເຄາະຂໍ້ມູນແມ່ນເປັນແບບປະລິມານ ໂດຍໃຊ້ແບບຈຳລອງ Logistic Regression Model ເພື່ອທົດສອບເຖິງປັດໄຈທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງທືຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງຈຳປາສັກ. ຜົນການສຶກສາພົບວ່າປັດໄຈທີ່ສາມາດອະທິບາຍ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 90 % ຂຶ້ນໄປໄດ້ ປັດໄຈລະດັບການສຶກສາສູງສຸດຂອງເຈົ້າຂອງກິດຈະການທີ່ຈົບລະດັບວິຊາຊີບຂຶ້ນໄປ, ປະສົບການຂອງເຈົ້າຂອງກິດຈະການທີ່ເຄີຍເຮັດທຸລະກິດຜ່ານ, ຫົວຫນ່ວຍທຸລະກິດມີແຜນທຸລະກິດ, ລາຍຮັບສະເລ່ຍຕໍ່ປີຂອງຫົວຫນ່ວຍທຸລະກິດ ແລະ ຂະຫນາດແຮງງານຂອງຫົວຫນ່ວຍທຸລະກິດ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນກັບການເຂົ້າເຖິງແຫຼ່ງທຶນຂອງວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ. ສ່ວນປັດໄຈຫົວຫນ່ວຍທຸລະກິດຂະຫນາດກາງ ແລະ ປັດໄຈຕົ້ນທຶນລວມຂອງຫົວຫນ່ວຍທຸລະກິດໃນການດຳເນີນກິດຈະການແມ່ນມີຜົນທາງກົງຂ້າມກັບການເຂົ້າເຖິງແຫຼ່ງທຶນຂອງ SMEs. ເຫັນໄດ້ວ່າວິສາຫະກິດການຜະລິດຂະຫນາດນ້ອຍແມ່ນມີຄວາມຕ້ອງການເງິນທຶນຫຼາຍກວ່າວິສາຫະກິດຂະຫນາດກາງໃນການເຂົ້າຫາແຫຼ່ງເງິນທຶນທີ່ໃຊ້ໃນການດຳເນີນກິດຈະການ.

**ຄຳສັບສຳຄັນ:** ການເຂົ້າເຖິງແຫຼ່ງທຶນ, SMEs, Logistic Regression Model.

---

[1] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ:* williamvishnuwu@gmail.com

[2] *ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມະຫາວິທະຍາໄລຈຳປາສັກ, ອີເມລ:* ctnksengsouliya@gmail.com

[3] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ: psack.sp.cu2010@gmail.com*

[4] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ: oudtakonest@cu.edu.la*

# The Effect of Access to Financial Resources on the Performance of Small and Medium Production Enterprises in Champasak province

Visoun KEOKHAMPHUI[1], Sengsouliya CHANTHANAKHONE[2], Phonesack SOPHA[3], Oudtakone SINGTHONG[4]

## Abstract

This research aims to investigate the variables influencing small and medium-sized businesses' ability to obtain financing in the province of Champasak. In order to gather and combine data from interviews with owners of small and medium-sized manufacturing businesses in Champasak Province, a total of 225 units in 2023, a questionnaire was employed as the study's instrument. The determinants influencing small and medium-sized businesses' credit access are tested using a quantitative data analysis utilizing the Logistic Regression Model. The study's findings indicate that the factors associated with the highest level of education are those that can be statistically tested and explained with a confidence level of 90%. The background of previous business owners, the existence of a business plan, the business unit's average yearly revenue, and the workforce size, all of which are positively correlated with small and medium-sized businesses' credit access in Champasak province. SMEs' credit access is impacted in the opposite way by the medium business unit factor and the business unit's total cost factor when conducting business. It is evident that tiny manufacturing firms require more money to acquire sources of funding for operations than do medium-sized businesses.

**Keywords**

Credit access, SMEs, Logistic Regression Model

*[1] Department of Industry and Commerce Champasak Province Email: Williamvishnuwu@gmail.com*
*[2] Sciencetific and Academic Office, CU, Email: ctnksengsouliya@gmail.com*
*[3]Faculty of Economics and management, Email: psack.sp.cu2010@gmail.com*
*[4] Faculty of Economics and Management, Email: oudtakonest@cu.edu.la*

**1. ພາກສະເໜີ**

ໃນເສດຖະກິດໂລກທີ່ມີລັກສະນະໂດຍການທີ່ເຄີຍມີການເພີ່ມທະວີການການແຂ່ງຂັນ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ກວມເອົາອັດຕາສ່ວນວິສາຫະກິດທົ່ວໂລກ ແລະ ປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນການພັດທະນາເສດຖະກິດໃນຫຼາຍປະເທດ (Driouach et al., 2019; Saunila, 2020). SMEs ມີການດຳເນີນງານທີ່ຄ່ອງຕົວ ແລະ ມີຄວາມສາມາດດ້ານຜົນງານຫຼືຄິດປະດິດສ້າງດ້ານການສົ່ງເສີມການຜະລິດຕະພັນ ແລະ ການນຳໃຊ້ເຕັກໂນໂລຊີ ເພື່ອຕອບສະໜອງກັບສິ່ງທ້າທາຍຕ່າງໆ ຫຼາຍຢ່າງ, ເຊິ່ງສົ່ງຜົນກະທົບດ້ານບວກທາງດ້ານເສດຖະກິດຢ່າງແຂງແຮງຂອງເສດຖະກິດຂອງປະເທດຕ່າງໆ (Gancarczyk and Gancarczyk, 2018; Pisani et al., 2017). ແນວໃດກໍດີ, ໃນສະພາບແວດລ້ອມແຫ່ງການດຳເນີນທຸລະກິດທີ່ມີການແຂ່ງຂັນ ແລະ ມີການພັດທະນາຢ່າງບໍ່ຢຸດຢັ້ງ, SMEs ສ່ວນໃຫຍ່ຍັງຂາດຊັບພະຍາກອນທີ່ຕ້ອງການເພື່ອຂະຫຍາຍການດຳເນີນທຸລະກິດໃນລະດັບທີ່ທຽບເທົ່າກັບວິສາຫະກິດຂະໜາດໃຫຍ່ (Azadegan et al., 2013), ເຊັ່ນ: ຊັບພະຍາກອນທາງດ້ານການເງິນ, ເວລາ, ບຸກຄະລາກອນ, ຄວາມຊຳນານດ້ານວິຊາການ, ແລະໂຄງສ້າງອົງການຈັດຕັ້ງແບບຍືນຍົງ (Ciliberti et al., 2011), ສິ່ງຜົນເຮັດໃຫ້ເຂົາເຈົ້າເສຍປຽບ ເຖິງຢ່າງໃດກໍ່ຕາມເນື່ອງຈາກມູນຄ່າການລົງທຶນຂອງ SMEs ມີຄວາມຢືດຢຸ່ນ ແລະ ສາມາດປັບຕົວໄດ້ (Genc et al., 2019). ດັ່ງນັ້ນ, ຈຶ່ງຖືວ່າ SMEs ເປັນຫົວໜ່ວຍປະດິດສ້າງສິນຄ້າ ແລະ ບໍລິການໃນສະພາບແວດລ້ອມທາງທຸລະກິດ ເຖິງແມ່ນວ່າຈະມີຂໍ້ຈຳກັດດ້ານຊັບພະຍາກອນ.

SMEs ໃນ ສປປ ລາວ ກວມເອົາ 99,8% ຂອງຫົວໜ່ວຍທຸລະກິດທັງໝົດ (ອາຊຽນ 88-99%), ການປະກອບສ່ວນໃນ GDP ປະມານ 16%, ປະກອບສ່ວນໃນການສົ່ງອອກ ປະມານ 12%, ປະກອບສ່ວນໃນການຈ້າງງານ (ໃນຂະແໜງທຸລະກິດ) ປະມານ 82% (ອາຊຽນ 52-97%). ໃນປີ 2004 ລັດຖະບານແຫ່ງ ສປປ ລາວ ໄດ້ອອກດຳລັດ 42/ນຍ, ລົງວັນທີ 20 ເມສາ 2004 ວ່າດ້ວຍການສົ່ງເສີມ ແລະ ພັດທະນາ SMEs. ຕໍ່ມາໃນວັນທີ 08 ມີນາ 2005 ນາຍົກລັດຖະມົນຕີ ອອກຂໍ້ຕົກລົງແຕ່ງຕັ້ງ ຄະນະກຳມະການສົ່ງເສີມ ແລະ ພັດທະນາ SMEs ເພື່ອເປັນການວາງເປົ້າໝາຍຍຸດທະສາດຫ້ອງການສົ່ງເສີມ ແລະ ພັດທະນາ SMEs ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 17 ສິງຫາ 2005. ຫຼັງຈາກນັ້ນມາຮອດວັນທີ 9 ກັນຍາ 2005 ນາຍົກລັດຖະມົນຕີອອກດຳລັດຮັບຮອງ ແລະ ປະກາດໃຊ້ຍຸດທະສາດພັດທະນາ SMEs ໄລຍະ 5 ປີ ຄັ້ງທີ I ແຕ່ 2006-2010. ແຜນພັດທະນາ SMEs ໄລຍະ 5 ປີ ຄັ້ງທີ II ແຕ່ 2011-2015 ໄດ້ກາຍເປັນສ່ວນໜຶ່ງຂອງແຜນພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII. ປີ 2011 ລັດຖະບານໄດ້ຍົກລະດັບດຳລັດວ່າດ້ວຍການສົ່ງເສີມ ແລະ ພັດທະນາ SMEs ຂຶ້ນເປັນກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

ປະຈຸບັນສະພາບແວດລ້ອມການແຂ່ງຂັນທີ່ SMEs ພະເຊີນຢູ່ໃນປະຈຸບັນໄດ້ກະຕຸ້ນໃຫ້ພວມເຂົາຊອກຫາວິທີການປັບປຸງຄວາມສາມາດສ້າງນະວັດຕະກຳ ເພື່ອສົ່ງເສີມຄວາມສາມາດໃນການແຂ່ງຂັນ. ບັນດາວິສາຫະກິດ SMEs ໄດ້ປະສົບກັບຄວາມທ້າທາຍອັນໃຫຍ່ຫຼວງໂດຍການເປີດກວ້າງການແຂ່ງຂັນໃນທົ່ວໂລກ, ແຕກຕ່າງຈາກວິສາຫະກິດຫຼາຍປະເທດ, SMEs ມັກຈະຂາດຊັບພະຍາກອນ ແລະຄວາມສາມາດທີ່ຈຳເປັນ, ເຊິ່ງເຮັດໃຫ້ຂະບວນການທັນເປັນສາກົນມີຄວາມທ້າທາຍຫຼາຍຂຶ້ນ. ນະວັດຕະກຳເປັນວິທີໜຶ່ງທີ່ສຳຄັນທີ່ຈະແຂ່ງຂັນກັນໄດ້ ເພາະມັນນຳໄປສູ່ການຫຼຸດຕົ້ນທຶນ ແລະ ຄວາມແຕກຕ່າງຂອງຜະລິດຕະພັນ(Rosenbusch et al., 2011).

ໂດຍທົ່ວໄປແລ້ວ ວິສາຫະກິດຂະໜາດນ້ອຍແລະຂະໜາດກາງ (SMEs) ຂາດທຶນຮອນພຽງພໍ ແລະ ຕ້ອງການຄວາມເອົາໃຈໃສ່ເປັນພິເສດ ເນື່ອງຈາກຄວາມໂປ່ງໃສທາງດ້ານຂໍ້ມູນຂ່າວສານ ແລະ ແຫຼ່ງການເງິນມີຈຳກັດ (Xiang and

Worthington, 2017). ໃນບັນດາສະຖາບັນການເງິນໃນລະບົບຕ່າງໆ ການຄໍ້າປະກັນສິນເຊື່ອເປັນແນວທາງສໍາຄັນໃນການບັນເທົາຄວາມລໍາບາກໃນການຈັດຫາເງິນທຶນສໍາລັບທຸລະກິດຂອງ SMEs ໃນທົ່ວໂລກ ເພື່ອຫຼຸດຂໍ້ຈໍາກັດທາງດ້ານການເງິນສໍາລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ລັດຖະບານທົ່ວໂລກໄດ້ແນະນໍາວິທີການຕ່າງໆ ເຊັ່ນການສະໜັບສະໜູນການພັດທະນາສະຖາບັນການເງິນຂະໜາດນ້ອຍ ແລະ ຂະໜາດກາງ, ການພັດທະນາຕະຫຼາດທຶນຫຼາຍລະດັບ, ການຈັດຕັ້ງສໍານັກງານບໍລິຫານທຸລະກິດຂະໜາດນ້ອຍເພື່ອຄໍ້າປະກັນເງິນກູ້ ແລະ ປ່ອຍສິນເຊື່ອລາຍຍ່ອຍໂດຍກົງ (Ryan et al., 2014). ທີ່ຜ່ານມາມີງານວິໄຈຂອງ Bello and Mustapha (2021) ພົບວ່າ ອາຍຸຂອງກິດຈະການ, ທັກສະຄວາມຮູ້ ແລະ ປະສົບການຂອງຜູ້ປະກອບແມ່ນເປັນປັດໄຈກໍານົດການເຂົ້າເຖິງການເງິນລະຫວ່າງການຜະລິດ, ວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງໃນໄນຈີເລຍ, ໃນ Kyophilavong (2011) ພົບວ່າ ປະເພດຂອງກິດຈະການທີ່ເຮັດທຸລະກິດອາຫານແລະເຄື່ອງດື່ມ ແລະ ກິດຈະການຕັດຫຍິບນັ້ນທີຜົນທາງກົງກັນຂ້າມຕໍ່ການເຂົ້າຫາເງິນທຶນຂອງ SMEs ໃນ ສປປ ລາວ, ໃນບົດຄົ້ນຄວ້າຂອງ Srithirath and Sukcharoensin (2022) ພົບວ່າທັກສະທາງການເງິນຂອງຜູ້ປະກອບການສູງຈະສົ່ງຜົນຕໍ່ການເຂົ້າເຖິງສິນເຊື່ອຂອງ SMEs ໃນນະຄອນຫຼວງວຽງຈັນ ສປປ ລາວ ແລະ ງານວິໄຈຂອງ SENGDALA and Pheng (2022) ພົບວ່າ ຫລັກຊັບຄໍ້າປະກັນ, ອາຍຸຂອງກິດຈະການ, ແຜນທຸລະກິດມີຜົນທາງບວກຕໍ່ການເຂົ້າເຖິງສິນເຊື່ອຂອງຂອງ SMEs ໃນແຂວງໄຊຍະບູລີ ສປປ ລາວ.

ຈາກຄວາມສໍາຄັນດັ່ງກ່າວນັ້ນຜູ້ວິໄຈຈຶ່ງມີຄວາມສົນ ໃຈເພື່ອສຶກສາຄົ້ນຄວ້າເຖິງປັດໄຈທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງທຶນຂອງວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງ  ພາຍໃນແຂວງ ຈໍາປາສັກ. ເຊິ່ງກຸ່ມປະຊາກອນເປົ້າໝາຍໃນການສຶກສາຄົ້ນຄ້ວາວິໄຈໃນຄັ້ງແມ່ນຫົວໜ່ວຍວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງຈໍາປາສັກ ລວມທັງໝົດ 513 ຫົວໜ່ວຍ. ໂດຍຈະເກັບກໍາຂໍ້ມູນໃນປີ 2023. ຜົນຄາດວ່າຈະໄດ້ຮັບຈະຮູ້ເຖິງປັດໄຈທີ່ຈະມີຜົນຕໍ່ການເຂົ້າເຖິງແຫຼ່ງທຶນຂອງວິສະຫາກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈໍາປາສັກ ແລະ ການສຶກສາຄົ້ນຄວ້ານີ້ເປັນເປັນຂໍ້ມູນທີ່ຈະມີສ່ວນສະໜັບສະໜູນວຽກງານການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງທີ່ສໍາຄັນຫຼາຍປະການ.

## 2. ຈຸດປະສົງ

2.1 ສຶກສາເຖິງປັດໄຈທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງວິສະຫາກິການຜະລິດ ຂະໜາດນ້ອຍ ແລະ ຂະໜາດກາງພາຍໃນແຂວງ ຈໍາປາສັກ

2.2 ສຶກສາເຖິງຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນຕໍ່ຜົນການດໍາເນີນງານຂອງວິສະຫາກິການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈໍາປາສັກ

## 3. ວິທີການຄົ້ນຄວ້າ

ການສຶກສາຄົ້ນຄົ້ວວິໄຈໃນຄັ້ງນີ້ປະຊາກອນແມ່ນຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງຈໍາປາສັກ ລວມທັງໝົດ 513 ຫົວໜ່ວຍ, ແລະ ກຸ່ມຕົວຢ່າງແມ່ນອີງໃສ່ວິທີຂອງ Yamene. T (1967) ດັ່ງນີ້:

$$n=\frac{513}{1+[513*(0.05)^2]}=225$$

ດັ່ງນັ້ນກຸ່ມຕົວຢ່າງ 225 ຫົວຫນ່ວຍ ການກໍານົດຂະຫນາດຂອງກຸ່ມຕົວຢ່າງເປັນແບບໂກຕ້າ (Quota Sampling) ຈາກວິສາຫະກິດການຜະລິດຂະຫນາດນ້ອຍ ຈໍານວນ 151 ຫົວຫນ່ວຍ ແລະ ວິສາຫະກິດການຜະລິດຂະຫນາດກາງ 74 ຫົວຫນ່ວຍ ແລະ ການສຸ່ມຕົວຢ່າງແມ່ນດ້ວຍວິທີແບບບັງເອີນ (Accidental Sampling).

ວິເຄາະຂໍ້ມູນແມ່ນແບບປະລິມານແລະມີແບບຈຳລອງ Logistic Regression Model ເພື່ອໃຊ້ທົດສອບເຖິງປັດໄຈໃດແດ່ທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງທືຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງຈຳປາສັກ. ພາຍໃນແຂວງຈຳປາສັກ.

ສຳລັບແບບຈຳລອງທີ່ໃຊ້ເຂົ້າໃນການຄາດປະມານ ປັດໄຈທີ່ມີຜົນຕໍ່ການການເຂົ້າເຖິງແຫຼ່ງທຶນຂອງວິສະຫາກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ ແມ່ນໄດ້ອີງໃສ່ແບບຈຳລອງຂອງ Bello and Mustapha (2021)

$$Pr(L_{ij}=1) = (P_{ij}/1-P_{ij}) = \alpha + \beta(InOE_{ij}) + e_{ij}$$

L ແທນໃຫ້ການກູ້ຢືມເງິນຈາກທະນາຄານທຸລະກິດ ຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເຊິ່ງເປັນຕົວປ່ຽນ ຫຸ່ນ (Dummy variables) ໂດຍມີຄ່າເທົ່າ 1 ຖ້າວ່າວິສາຫະກິດໃດໄດ້ກູ້ຢືມເງິນຈາກທະນະຄານທຸລະກິດ ແລະ ມີຄ່າເປັນສູນ (0) ສຳລັບກໍລະນີ ອື່ນໆ. $InOE_{ij}$ ແມ່ນປັດໄຈລັກສະນະຕ່າງຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ວິສາຫາກິດທີ $i$ ປະເພດທີ $j$ , $\alpha$ ແມ່ນຄ່າຄົງທີ່, ສ່ວນວ່າ $\beta$ ແມ່ນຄ່າສຳປະສິດຂອງ. ສຳລັບ $e_{ij}$ ແມ່ນຄ່າຄວາມຄາດເຄື່ອນ.ສຳລັບລາຍລະອຽດກ່ຽວກັບຕົວປ່ຽນທີ່ໃຊ້ໃນແບບຈຳລອງເພື່ອວິເຄາະປັດໄຈທີ່ມີຜົນຕໍ່ການເຂົ້າເຖິງສິນເຊື່ອຂອງວິສາຫາກິດຂະໜາດນ້ອຍ ແລະ ຂະໜາດກາງພາຍໃນ ແຂວງຈຳປາສັກ ສະແດງໃນຕາຕະລາງທີ 01.

**4. ຜົນໄດ້ຮັບ**

ຈາກຕາຕະລາງທີ **4.1** ສະແດງຜົນວິເຄາະປັດໄຈທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງໃນແຂວງຈຳປາສັກ ໂດຍຈາກການວິເຄາະແບບຈຳລອງໂລຈິດທີ່ປະເມີນໄດ້ລວມກັບຄ່າ Marginal effect ສາມາດວິເຄາະຜົນໄດ້ດັ່ງນີ້:

ປັດໄຈລະດັບການສຶກສາສູງສຸດຂອງເຈົ້າຂອງກິດຈະການທີ່ຈົບລະດັບວິຊາຊີບຂຶ້ນໄປ (edu) ມີຄ່າສຳປະສິດເທົ່າກັບ 0.748 ສະແດງໃຫ້ເຫັນວ່າ: ລະດັບການສຶກສາຂອງເຈົ້າຂອງກິດຈະການທີ່ຮຽນຈົບລະດັບວິຊາຊີບຂຶ້ນໄປມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ໃນແຂວງຈຳປາສັກ ເມື່ອປຽບທຽບກັບເຈົ້າຂອງກິດຈະການທີ່ມີລະດັບການສຶກສາທີ່ຕໍ່າກວ່າລະດັບວິຊາຊີບ ມີຄວາມສຳພັນໄປໃນທິດທາງດຽວກັນເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 90 % ແລະ ຄ່າ Marginal effect ເທົ່າກັບ 0.0142 ໝາຍຄວາມວ່າເຈົ້າຂອງກິດຈະການຫືອຫນ່ວຍທຸລະກິດໃດທີ່ມີລະດັບການສຶກສາລະດັບວິຊາຊີບຂຶ້ນໄປຈະມີໂອກາດທີ່ຈະເຂົ້າເຖິງແຫຼ່ງເງິນທຶນຄືການກູ້ຢືມເງິນນັ້ນຫຼາຍກວ່າ ຫືອຫນ່ວຍທຸລະກິດໃດທີ່ເຈົ້າຂອງກິດຈະການລະດັບການສຶກສາລະດັບອື່ນໆ ເຖິງ 1.42 ສ່ວນຮ້ອຍ

ປັດໄຈປະສົບການຂອງເຈົ້າຂອງກິດຈະການທີ່ເຄີຍເຮັດທຸລະກິດຜ່ານມາ (exp) ມີຄ່າສຳປະສິດເທົ່າກັບ 0.751 ສະແດງໃຫ້ເຫັນວ່າ: ປະສົບການຂອງເຈົ້າຂອງກິດຈະການທີ່ເຄີຍເຮັດທຸລະກິດຜ່ານມາມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ໃນແຂວງຈຳປາສັກ ເມື່ອປຽບທຽບກັບເຈົ້າຂອງກິດຈະການທີ່ບໍ່ມີປະສົບການຂອງເຈົ້າຂອງກິດຈະການທີ່ເຄີຍເຮັດທຸລະກິດຜ່ານມາ ແລະ ມີຄວາມສຳພັນໄປໃນທິດທາງດຽວກັນເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 95 % ແລະ ຄ່າ Marginal effect ເທົ່າກັບ 0.1653 ໝາຍຄວາມວ່າເຈົ້າຂອງກິດຈະການ ຫືອຫນ່ວຍທຸລະກິດໃດທີ່ມີປະສົບການຂອງເຈົ້າຂອງກິດຈະການທີ່ເຄີຍເຮັດທຸລະກິດຜ່ານມາຈະມີໂອກາດທີ່ຈະເຂົ້າເຖິງແຫຼ່ງເງິນທຶນຄື

ການກູ້ຢືມເງິນນັ້ນຫຼາຍກວ່າ ຫົວໜ່ວຍທຸລະກິດໃດທີ່ເຈົ້າຂອງກິດຈະການທີ່ມີບໍ່ປະສົບການຂອງເຈົ້າຂອງກິດຈະການທີ່ເຄີຍເຮັດທຸລະກິດທີ່ກ່ຽວຂ້ອງຜ່ານມາເຖິງ 16.53 ສ່ວນຮ້ອຍ

ປັດໄຈຫົວໜ່ວຍທຸລະກິດຂະໜາດກາງ (medium) ມີຄ່າສຳປະສິດເທົ່າກັບ -1.136 ສະແດງໃຫ້ເຫັນວ່າ: ຫົວໜ່ວຍທຸລະກິດຂະໜາດກາງມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ໃນແຂວງຈຳປາສັກ ເມື່ອປຽບທຽບກັບຫົວໜ່ວຍທຸລະກິດຂະໜາດນ້ອຍ ແຕ່ມີຄວາມສຳພັນໄປໃນທິດທາງກົງກັນຂ້າມກັນເຊິ່ງບໍ່ເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 95 % ແລະ ຄ່າ Marginal effect ເທົ່າກັບ -0.2318 ໝາຍຄວາມວ່າ ຫົວໜ່ວຍທຸລະກິດໃດທີ່ເປັນຫົວໜ່ວຍທຸລະກິດຂະໜາດກາງ ຈະມີໂອກາດທີ່ຈະເຂົ້າເຖິງແຫຼ່ງເງິນທຶນໜ້ອຍກວ່າ ຫົວໜ່ວຍທຸລະກິດຂະໜາດນ້ອຍ ເຖິງ 23.18 %.

ປັດໄຈຫົວໜ່ວຍທຸລະກິດມີແຜນທຸລະກິດໃນການດຳເນີນກິດຈະການ (BP) ມີຄ່າສຳປະສິດເທົ່າກັບ 0.934 ສະແດງໃຫ້ເຫັນວ່າ: ຫົວໜ່ວຍທຸລະກິດທີ່ມີແຜນທຸລະກິດໃນການດຳເນີນກິດຈະການມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ໃນແຂວງຈຳປາສັກ ເມື່ອປຽບທຽບກັບຫົວໜ່ວຍທຸລະກິດທີ່ບໍ່ມີແຜນທີ່ຊັດເຈນ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 95 % ແລະ ຄ່າ Marginal effect ເທົ່າກັບ 0.2177 ໝາຍຄວາມວ່າ ຫົວໜ່ວຍທຸລະກາດທີ່ມີແຜນທຸລະກິດໃນການດຳເນີນທຸລະກິດນັ້ນຈະມີໂອກາດທີ່ຈະເຂົ້າເຖິງແຫຼ່ງເງິນທຶນຫຼາຍກວ່າຫົວໜ່ວຍທຸລະກິດທີ່ບໍ່ມີແຜນທຸລະກິດເຖິງ 21.77 %.

ປັດໄຈຕົ້ນທຶນລວມຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການ (lntc) ມີຄ່າສຳປະສິດເທົ່າກັບ -0.528 ສະແດງໃຫ້ເຫັນວ່າ: ຕົ້ນທຶນລວມທີ່ຫົວໜ່ວຍທຸລະກິດໃຊ້ໃນການດຳເນີນກິດຈະການມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 95 % ແລະ ຄ່າ Marginal effect ເທົ່າກັບ -0.1173 ໝາຍຄວາມວ່າຕົ້ນທຶນລວມຂອງຫົວໜ່ວຍທຸລະກິດຂະໜາດນ້ອຍແລະຂະໜາດກາງເພີ່ມຂຶ້ນ 1% ກໍ່ຈະເຮັດໃຫ້ມີໂອກາດທີ່ຈະເຂົ້າເຖິງແຫຼ່ງທຶນເພີ່ມຂຶ້ນເຖິງ 11.73 %.

ປັດໄຈ ລາຍຮັບສະເລ່ຍຕໍ່ປີຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການ (lnturn) ມີຄ່າສຳປະສິດເທົ່າກັບ 0.894 ສະແດງໃຫ້ເຫັນວ່າ: ລາຍຮັບສະເລ່ຍຕໍ່ປີຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 99 % ແລະ ຄ່າ Marginal effect ເທົ່າກັບ 0.1988 ໝາຍຄວາມວ່າ ລາຍຮັບສະເລ່ຍຕໍ່ປີຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການຂອງຫົວໜ່ວຍທຸລະກິດຂະໜາດນ້ອຍແລະຂະໜາດກາງເພີ່ມຂຶ້ນ 1 % ກໍ່ຈະເຮັດຈະມີໂອກາດທີ່ຈະເຂົ້າເຖິງແຫຼ່ງທຶນເພີ່ມຂຶ້ນເຖິງ 19.88 %.

ປັດໄຈ ຂະໜາດແຮງງານຂອງຫົວໜ່ວຍໃນການດຳເນີນກິດຈະການ (Es) ມີຄ່າສຳປະສິດເທົ່າກັບ 0.033ສະແດງໃຫ້ເຫັນວ່າ: ຂະໜາດແຮງງານຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມ

ເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 90 % ແລະ ຄ່າ Marginal effect ເທົ່າກັບ 0.0073 ໝາຍຄວາມວ່າຂະໜາດແຮງງານຂອງຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງເພີ່ມຂຶ້ນ 1 ຄົນ ກໍ່ຈະເຮັດຈະມີໂອກາດທີ່ຈະເຂົ້າເຖິງແຫຼ່ງທຶນເພີ່ມຂຶ້ນເຖິງ 0.73 %.

ສຳລັບປັດໄຈອື່ນໆໄດ້ແກ່: ເພດຂອງຜູ້ປະກອບການເປັນເພດຍິງ, ອາຍຸຂອງຜູ້ປະກອບການ, ສັນຊາດຂອງຜູ້ປະກອບການເປັນຄົນລາວ, ເຈົ້າຂອງກິດຈະການມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດ, ເຈົ້າຂອງກິດຈະການມີຄວາມຮູ້ກ່ຽວກັບການເງິນ-ການບັນຊີ, ອາຍຸຂອງກິດຈະການທີ່ດຳເນີນຢູ່, ທຸລະກິດທີ່ມີແຮງງານມີລະດັບການສຶກສາຈົບລະດັບປະລິນຍາຕີຂຶ້ນໄປ, ຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ ແລະ ເຈົ້າຂອງກິດຈະ ການໄດ້ເຂົ້າຮ່ວມການຝຶກອົບຮົມທັກສະຄວາມຮູ້ກ່ຽວກັບທຸລະກິດ ທັງໝົດນີ້ແມ່ນບໍ່ມີຜົນຕໍ່ກັບໂອກາດການເຂົ້າເຖິງແຫຼ່ງເງິນທຶນ ແລະ ບໍ່ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບຕ່ຳກວ່າ 90%

ຕາຕະລາງທີ 4.1 ສະແດງຜົນການວິເຄາະປັດໄຈທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ໃນແຂວງຈຳປາສັກ

| **ຕົວປ່ຽນ** | | **ຄ່າສຳປະສິດ** | **z** | **P-value** | **Marginal Effect (dy/dx)** |
|---|---|---|---|---|---|
| **ຄ່າຄົງທີ່** | | -4.470212 | -2.18 | 0.029 | |
| – ເພດຂອງຜູ້ປະກອບການເປັນເພດຍິງ | gender | 0.064 | 0.18 | 0.856 | 0.0142 |
| – ອາຍຸຂອງຜູ້ປະກອບການ | Age | 0.004 | 0.15 | 0.880 | 0.0008 |
| – ສັນຊາດຂອງຜູ້ປະກອບການເປັນຄົນລາວ | Na | -0.043 | -0.09 | 0.931 | -0.0096 |
| – ຜູ້ປະກອບການລະດັບການສຶກສາຈົບລະດັບວິຊາຊີບຂຶ້ນໄປ | Edu | 0.748* | 1.89 | 0.059 | 0.1744 |
| – ຜູ້ປະກອບການມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດ | Busm | 0.511 | 1.41 | 0.159 | 0.1160 |
| – ຜູ້ປະກອບການມີຄວາມຮູ້ກ່ຽວກັບການເງິນ-ການບັນຊີ | financ | 0.609 | 1.61 | 0.108 | 0.1396 |
| – ຜູ້ປະກອບການມີປະສົບການເຮັດທຸລະກິດມາກ່ອນ | Exp | 0.751** | 2.27 | 0.023 | 0.1653 |
| - ອາຍຸຂອງກິດຈະການທີ່ດຳເນີນຢູ່ | Lto | 0.044 | 1.06 | 0.287 | 0.0098 |
| - ຫົວໜ່ວຍທຸລະກິດຂະໜາດກາງ | medium | -1.136** | -2.13 | 0.033 | -0.2318 |
| – ຫົວໜ່ວຍທຸລະກິດມີແຜນທຸລະກິດ | Bp | 0.934** | 2.55 | 0.011 | 0.2177 |
| – ຕົ້ນທຶນລວມຂອງຫົວໜ່ວຍທຸລະກິດ | Lntc | -0.528** | -2.01 | 0.045 | -0.1173 |
| – ລາຍຮັບສະເລ່ຍຕໍ່ປີຂອງຫົວໜ່ວຍທຸລະກິດ | lnturn | 0.894*** | 3.24 | 0.001 | 0.1988 |
| – ຂະໜາດແຮງງານ | Es | 0.033* | 1.89 | 0.058 | 0.0073 |
| – ທຸລະກິດທີ່ມີແຮງງານມີລະດັບການສຶກສາຈົບລະດັບປະລິນຍາຕີຂຶ້ນໄປ | bacl | 0.047 | 0.11 | 0.911 | 0.0104 |

| | | | | | |
|---|---|---|---|---|---|
| – ຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ | Smd | 0.187 | 0.35 | 0.727 | 0.0423 |
| – ຜູ້ປະກອບໄດ້ເຂົ້າຮ່ວມການຝຶກອົບຮົມທັກສະຄວາມຮູ້ກ່ຽວກັບທຸລະກິດ | train | -0.297 | -0.75 | 0.452 | -0.0671 |
| LR $chi^2(15)$ = 52.26 Prob > $chi^2$ = 0.0000 Overall Percentage Correct = 75.76 | | | | | |

**ໝາຍເຫດ : *** ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິ 99 %,**

****ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິ 95 % ແລະ**

***ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິ 90 %.**

ຕາຕະລາງທີ 1: ຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນຕໍ່ຜົນການດຳເນີນງານຂອງວິສະຫາກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ

| **ຕົວປ່ຽນ** | | **ຄ່າສຳປະສິດ** | **t** | **P-value** |
|---|---|---|---|---|
| **ຄ່າຄົງທີ່** | | 0.343 | 0.53 | 0.595 |
| – ຫົວໜ່ວຍທຸລະກິດທີ່ໄດ້ເຂົ້າເຖິງແຫຼ່ງເງິນທຶນ | L | 0.398*** | 3.34 | 0.001 |
| – ເພດຂອງຜູ້ປະກອບການເປັນເພດຍິງ | gender | -0.061 | -0.52 | 0.601 |
| – ອາຍຸຂອງຜູ້ປະກອບການ | age | -0.008 | -1.09 | 0.277 |
| – ສັນຊາດຂອງຜູ້ປະກອບການເປັນຄົນລາວ | na | -0.314* | -1.92 | 0.057 |
| – ຜູ້ປະກອບການມີລະດັບການສຶກສາຈົບລະດັບວິຊາຊີບຂຶ້ນໄປ | edu | 0.032 | 0.23 | 0.815 |
| – ຜູ້ປະກອບການມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດ | busm | 0.288** | 2.32 | 0.021 |
| – ຜູ້ປະກອບການມີຄວາມຮູ້ກ່ຽວກັບການເງິນ-ການບັນຊີ | financ | -0.046 | -0.36 | 0.723 |
| - ຜູ້ປະກອບການມີປະສົບການເຮັດທຸລະກິດມາກ່ອນ | exp | -0.064 | -0.59 | 0.557 |
| - ອາຍຸຂອງກິດຈະການທີ່ດຳເນີນຢູ່ | Lto | 0.026* | 1.90 | 0.059 |
| – ຫົວໜ່ວຍທຸລະກິດຂະໜາດກາງ | Medium | 0.881*** | 5.84 | 0.000 |
| – ຫົວໜ່ວຍທຸລະກິດມີແຜນທຸລະກິດ | Bp | 0.308** | 2.41 | 0.017 |
| – ຕົ້ນທຶນລວມຂອງຫົວໜ່ວຍທຸລະກິດ | lntc | 0.577*** | 8.66 | 0.000 |
| – ຂະໜາດແຮງງານ | Es | -0.008 | -1.58 | 0.117 |
| – ທຸລະກິດທີ່ມີແຮງງານມີລະດັບການສຶກສາຈົບລະດັບປະລິນຍາຕີຂຶ້ນໄປ | bacl | 0.001 | 0.00 | 0.996 |
| – ຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ | Smd | 0.300** | 1.82 | 0.070 |
| – ເຈົ້າຂອງກິດຈະການໄດ້ເຂົ້າຮ່ວມການຝຶກອົບຮົມທັກສະຄວາມຮູ້ກ່ຽວກັບທຸລະກິດ | train | 0.079 | 0.61 | 0.545 |

ໝາຍເຫດ : *** ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິ 99 %,

**ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິ 95 % ແລະ

*ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິ 90 %

ຈາກຜົນການກວດບັນຫາພະຫຸສຳພັນຂອງບັນດາຕົວປ່ຽນອິດສະຫຼະທີ່ຈະໃຊ້ໃນແບບຈຳລອງພົບວ່າ: ຄ່າສຳປະສິດຄວາມສຳພັນຂອງຄູ່ບັນຕົວປ່ຽນອິດສະຫຼະທັງໝົດທີ່ຈະໃຊ້ເຂົ້າໃນແບບຈຳລອງສູງສຸດພຽງແຕ່ 0.6175 ເທົ່ານັ້ນ (ເອກະສານຊ້ອນທ້າຍ 07), ເຊິ່ງຕ່ຳກວ່າ 0.80 ນັ້ນສະແດງວ່າບັນດາຕົວປ່ຽນອິດສະຫຼະດັ່ງກ່າວນັ້ນແມ່ນບໍ່ເກີດບັນຫາພະຫຸສຳພັນ (Multicollinearity) (Gujarati and Porter, 2009).

ກ່ອນການທົດສອບການພົວພັນລະຫວ່າງຜົນກະທົບຂອງການເຂົ້າເຖິງແຫຼ່ງເງິນທຶນຕໍ່ຜົນການດຳເນີນງານຂອງວິສະຫາກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ. ໄດ້ຄຳນວນສົມຜົນຖົດຖອຍພະຫຸຄູນ ດ້ວຍວິທີກຳລັງສອງນ້ອຍສຸດເຫັນວ່າສົມຜົນບໍ່ມີບັນຫາສະຫະສຳພັນ (Heteroskedasticity)

ຈາກຜົນຂອງການວິເຄາະທີ່ໄດ້ໃນຕາຕະລາງທີ່ທີ: 2 ເຫັນວ່າ: ຄ່າ R – squared = 0.6894 ເຮົາເຫັນວ່າບັນດາຕົວປ່ຽນອິດສະຫຼະສາມາດອະທິບາຍຕົວປ່ຽນຕາມໄດ້ໃນລະດັບ 68.94 % ແລະ ສາມາດບອກໄດ້ວ່າສົມຜົນດັ່ງກ່າວແມ່ນສາມາດນຳໃຊ້ໄດ້ເຊິ່ງສັງເກດຈາກຄ່າຂອງ F= 22.86 ໂດຍມີຄ່າ Prob > F = 0.0000 ໝາຍຄວາມວ່າຄ່າຂອງ Prob = 0.0000 < $\alpha = 0.05$ ດັ່ງນັ້ນ; ເຮົາສາມາດສະຫຼຸບໄດ້ວ່າ: ສົມຜົນສາມາດນຳໃຊ້ໄດ້ດ້ວຍລະດັບຄວາມເຊື່ອໝັ້ນ 99%, ເຊິ່ງສາມາດອະທິບາຍຜົນການວິເຄາະດັ່ງລຸ່ມນີ້:

ປັດໄຈຫົວໜ່ວຍທຸລະກິດທີ່ໄດ້ເຂົ້າເຖິງແຫຼ່ງເງິນທຶນ (L) ມີຄ່າສຳປະສິດເທົ່າກັບ 0.398 ສະແດງໃຫ້ເຫັນວ່າ: ຫົວໜ່ວຍທຸລະກິດທີ່ເຂົ້າເຖິງແຫຼ່ງເງິນທຶນ ຫຼືໄດ້ກູ້ຢືມເງິນໃນການດຳເນີນກິດຈະການມີຜົນຕໍ່ຜົນກຳໄລຂອງກິດຈະການ ເມື່ອປຽບທຽບກັບຫົວໜ່ວຍທຸລະກິດທີ່ບໍ່ມີການກູ້ຢືມ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 99 % ໝາຍຄວາມວ່າ ຫົວໜ່ວຍທຸລະກິດໃດທີ່ມີກູ້ຢືມເງິນໃນການດຳເນີນກິດຈະການຈະເຮັດໃຫ້ມີຜົນກຳໄລຂອງກິດຈະການຫຼາຍກວ່າຫົວໜ່ວຍທຸລະກິດທີ່ບໍ່ໄດ້ກູ້ຢືມເງິນເຖິງ 39.80 %.

ປັດໄຈສັນຊາດຂອງຜູ້ປະກອບການເປັນຄົນລາວ (na) ມີຄ່າສຳປະສິດເທົ່າກັບ -0.314 ສະແດງໃຫ້ເຫັນວ່າ: ສັນຊາດຂອງຜູ້ປະກອບການມີຜົນຕໍ່ຜົນກຳໄລຂອງກິດຈະການ ເຊິ່ງມີຄວາມສຳພັນໄປໃນທິດທາງກົງກັນຂ້າມກັບຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 90 % ແລະ ຫົວໜ່ວຍທຸລະກິດໃດທີ່ມີເຈົ້າຂອງເປັນຄົນລາວຈະເຮັດໃຫ້ມີຜົນກຳໄລຂອງກິດຈະການໜ້ອຍກວ່າຫົວໜ່ວຍທຸລະກິດທີ່ເຈົ້າຂອງເປັນຄົນຕ່າງປະເທດ ເຖິງ 31.40 %.

ປັດໄຈ ຜູ້ປະກອບການມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດ (busm) ມີຄ່າສຳປະສິດເທົ່າກັບ 0.288 ສະແດງໃຫ້ເຫັນວ່າ: ຜູ້ປະກອບການມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດມີຜົນຕໍ່ຜົນກຳໄລຂອງກິດຈະການ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນກັບຕົວປ່ຽນຕາມເຊິ່ງເປັນໄຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 95 % ແລະ ຫົວໜ່ວຍທຸລະກິດໃດທີ່ຜູ້ປະກອບການມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດຈະເຮັດໃຫ້ມີຜົນກຳໄລຂອງກິດຈະການຫຼາຍກວ່າຫົວໜ່ວຍທຸລະກິດທີ່ຜູ້ປະກອບການບໍ່ມີທັກສະຄວາມຮູ້ກ່ຽວກັບການບໍລິຫານທຸລະກິດເຖິງ 28.80 %.

ປັດໄຈອາຍຸຂອງກິດຈະການທີ່ດຳເນີນຢູ່ (Lto) ມີຄ່າສຳປະສິດເທົ່າກັບ 0.026 ສະແດງໃຫ້ເຫັນວ່າ: ອາຍຸ

ຂອງກິດຈະການທີ່ດຳເນີນຢູ່ມີຜົນຕໍ່ຜົນກຳໄລຂອງກິດຈະການ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຂ້າມກັບຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 90 % ແລະ ໝາຍຄວາມວ່າໄລຍະເວລາການການດຳເນີນກິດກິດຈະການຂອງຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະຂະໜາດກາງຫາກເພີ່ມຂຶ້ນ 1 ປີ ກໍ່ຈະເຮັດໄດ້ຜົນກຳໄລຂອງກິດຈະການເພີ່ມຂຶ້ນເຖິງ 2.60 %.

ປັດໄຈຫົວໜ່ວຍທຸລະກິດຂະໜາດກາງ (medium) ມີຄ່າສຳປະສິດເທົ່າກັບ 0.881 ສະແດງໃຫ້ເຫັນວ່າ: ຫົວໜ່ວຍທຸລະກິດຂະໜາດກາງມີຜົນຕໍ່ຜົນກຳໄລຂອງ SMEs ໃນແຂວງຈຳປາສັກ ເມື່ອປຽບທຽບກັບຫົວໜ່ວຍທຸລະກິດຂະໜາດນ້ອຍ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 95 % ແລະ ໝາຍຄວາມວ່າ ຫົວໜ່ວຍທຸລະກິດໃດທີ່ເປັນທຸລະກິດຂະໜາດກາງນັ້ນຈະເຮັດໄດ້ຜົນກຳໄລໃນການດຳເນີນກິດຈະການຫຼາຍກວ່າຫົວໜ່ວຍທຸລະກິດຂະໜາດນ້ອຍ ເຖິງ 88.10 %.

ປັດໄຈຫົວໜ່ວຍທຸລະກິດມີແຜນທຸລະກິດໃນການດຳເນີນກິດຈະການ (BP) ມີຄ່າສຳປະສິດເທົ່າກັບ 0.308 ສະແດງໃຫ້ເຫັນວ່າ: ຫົວໜ່ວຍທຸລະກິດທີ່ມີແຜນທຸລະກິດໃນການດຳເນີນກິດຈະການມີຜົນຕໍ່ຜົນກຳໄລຂອງ SMEs ໃນແຂວງຈຳປາສັກ ເມື່ອປຽບທຽບກັບຫົວໜ່ວຍທຸລະກິດທີ່ບໍ່ມີແຜນທີ່ຊັດເຈນ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 95 % ແລະ ໝາຍຄວາມວ່າ ຫົວໜ່ວຍທຸລະກດທີ່ມີແຜນທຸລະກິດໃນການດຳເນີນທຸລະກິດນັ້ນຈະເຮັດໄດ້ຜົນກຳໄລໃນການດຳເນີນກິດຈະການຫຼາຍກວ່າຫົວໜ່ວຍທຸລະກິດທີ່ບໍ່ມີແຜນທຸລະກິດເຖິງ 30.80 %.

ປັດໄຈຕົ້ນທຶນລວມຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການ (lntc) ມີຄ່າສຳປະສິດເທົ່າກັບ 0.577 ສະແດງໃຫ້ເຫັນວ່າ: ຕົ້ນທຶນລວມທີ່ຫົວໜ່ວຍທຸລະກິດໃຊ້ໃນການດຳເນີນກິດຈະການມີຜົນຕໍ່ຜົນກຳໄລຂອງ SMEs ໃນແຂວງຈຳປາສັກເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 99 % ແລະ ໝາຍຄວາມວ່າຕົ້ນທຶນລວມຂອງຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງເພີ່ມຂຶ້ນ 1% ກໍ່ຈະເຮັດຜົນກຳໄລຂອງກິດຈະການເພີ່ມຂຶ້ນເຖິງ 57.70 %.

ປັດໄຈຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ (Smd) ມີຄ່າສຳປະສິດເທົ່າກັບ 0.300 ສະແດງໃຫ້ເຫັນວ່າ: ຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ ມີຜົນຕໍ່ຜົນກຳໄລຂອງ SMEs ໃນແຂວງຈຳປາສັກ ເມື່ອປຽບທຽບກັບຫົວໜ່ວຍທຸລະກິດທີ່ບໍ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ ເຊິ່ງມີຄວາມສຳພັນໄປໃນທິດທາງດຽວກັນຕົວປ່ຽນຕາມເຊິ່ງເປັນໄປຕາມເຄື່ອງໝາຍທີ່ຄາດຄະເນໄວ້ ແລະ ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 90 % ແລະ ໝາຍຄວາມວ່າ ຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້ານັ້ນຈະເຮັດໄດ້ຜົນກຳໄລໃນການດຳເນີນກິດຈະການຫຼາຍກວ່າຫົວໜ່ວຍທຸລະກິດທີ່ບໍ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າເຖິງ 30.00 %.

ສຳລັບປັດໄຈອື່ນໆໄດ້ແກ່:ເພດຂອງຜູ້ປະກອບການເປັນເພດຍິງ, ອາຍຸຂອງຜູ້ປະກອບການ, ຜູ້ປະກອບການມີລະດັບການສຶກສາຈົບລະດັບວິຊາຊີບຂຶ້ນໄປ, ເຈົ້າຂອງກິດຈະການມີຄວາມຮູ້ກ່ຽວກັບການເງິນ-ການບັນຊີ, ຜູ້ປະກອບການມີປະສົບການເຮັດທຸລະກິດມາກ່ອນ, ຂະໜາດແຮງງານ, ທຸລະກິດທີ່ມີແຮງງານມີລະດັບການສຶກສາຈົບລະດັບປະລິນຍາຕີຂຶ້ນໄປ, ຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ, ເຈົ້າຂອງກິດຈະການໄດ້ເຂົ້າຮ່ວມການຝຶກອົບຮົມທັກສະຄວາມຮູ້ກ່ຽວກັບທຸລະກິດ

ທັງໝົດນີ້ແມ່ນບໍ່ມີຜົນຕໍ່ຜົນກຳໄລຂອງກິດຈະການ ແລະ ບໍ່ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບຕ່ຳກວ່າ 90%

**5. ວິພາກຜົນ**

ປັດໄຈທີ່ມີຄວາມສຳພັນໃນທິດທາງດຽວກັນກັບໂອກາດທີ່ຈະເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ປະກອບມີ ປັດໄຈລະດັບການສຶກສາ, ປະສົບການເຮັດທຸລະກິດຜ່ານມາຂອງຜູ້ປະກອບການ , ປັດໄຈທຸລະກິດມີແຜນທຸລະກິດ, ປັດໄຈຂະໜາດຂອງແຮງງານ ແລະ ປັດໄຈລາຍຮັບສະເລ່ຍຕໍ່ປີຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການ ແມ່ນຈະມີຜົນຕໍ່ໂອກາດທີ່ຈະເຂົ້າເຖິງແຫຼ່ງທຶນຂອງ SMEs ເພີ່ມຂຶ້ນ ທີ່ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 90 % ຂຶ້ນໄປ ເຊິ່ງສອດຂ້ອງກັບງານວິໄຈຂອງ Bello and Mustapha (2021) ທີ່ພົບວ່າທັກສະຄວາມຮູ້ ແລະ ປະສົບການຂອງຜູ້ປະກອບແມ່ນເປັນປັດໄຈກຳນົດການເຂົ້າເຖິງການເງິນລະຫວ່າງການຜະລິດ, ວິສາຫະກິດຂະໜາດນ້ອຍແລະຂະໜາດກາງໃນໄນຈີເລຍ. ສຳລັບການການສຶກສາແມ່ນ 1.42 % ແລະ ປັດໄຈດ້ານປະສົບການຂອງຜູ້ປະກອບການແມ່ນ 16.53 %. ແລະ ຍັງສອດຂ້ອງກັບງານວິໄຈຂອງ Ogubazghi and Muturi (2014) ເຊິ່ງຄົ້ນພົບວ່າທັກສະຂອງຜູ້ຈັດການມີຈຸດເດັ່ນໃນທາງບວກ ແລະ ມີຄວາມສຳພັນກັບ MSMEs ການເຂົ້າເຖິງການເງິນ ນີ້ຢືນຢັນການຄົ້ນພົບທີ່ຜ່ານມາການສຶກສາເຊັ່ນ Ogubazghi ແລະ Muturi (2014), ຄວາມສຳພັນລະຫວ່າງທັກສະຄວາມຮູ້ຂອງເຈົ້າຂອງກິດຈະການ MSMEs ເຂົ້າເຖິງແຫຼ່ງເງິນທຶນ. ຫມາຍຄວາມວ່າລະດັບການສຶກສາຈະຊ່ວຍໃຫ້ເຂົ້າໃຈເລື່ອງການເງິນບວກກັບປະສົບການການເຮັດທຸລະກິດຜ່ານມາແມ່ນຈະເຮັດໃຫ້ຜູ່ທີ່ຈະປ່ອຍເງິນກູ້ໃຫ້ເບິ່ງເຫັນດ້ານຄວາມສາມາດໃນການປະກອບກິດຈະການ.

ປັດໄຈທີ່ມີຄວາມສຳພັນໃນທິດທາງກົງກັນຂ້າມກັບກັນກັບໂອກາດທີ່ຈະເຂົ້າເຖິງແຫຼ່ງເງິນທຶນຂອງ SMEs ປະກອບມີ: ປັດໄຈຫົວໜ່ວຍທຸລະກິດຂະໜາດກາງ, ປັດໄຈຕົ້ນທຶນລວມຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການ ທີ່ຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມເຊື່ອໝັ້ນ 99 % ເຊິ່ງບໍ່ສອດຄ່ອງກັບງານວິໄຈຂອງ Pham (2017) ທີ່ພົບວ່າຂະໜາດຂອງທຸລະກິດຂະໜາດໃຫຍ່ຈະມີຊັບສິນຫຼາຍຈະສາມາດເຂົ້າເຖິງແຫຼ່ງເງິນທຶນຫຼາຍກວ່າວິສາຫະກິດຂະໜາດນ້ອຍໃນປະເທດ ດ້ວຍເຫດວ່າວິສາຫະກິດຂະໜາດໃຫຍ່ນັ້ນມີຫຼັກຊັບຄ້ຳປະກັນພຽງພໍຕໍ່ການກູ້ເງິນຈຶ່ງສາມາດເຂົ້າເຖິງແຫຼ່ງເງິນທຶນໄດ້ງ່າຍກວ່າ ເຊິ່ງແຕກຕ່າງຈາກຜົນການການສຶກສາຄົ້ນຄວ້າໃນຄັ້ງນີ້ ພົບວ່າວິສາຫະກິດຂະໜາດກາງ ແລະ ບວກກັບເງິນລົງທຶນທີ່ຫຼາຍແມ່ນມີຄວາມສຳພັນໃນທິດທາງກົງກັນຂ້າມຫມາຍຄວາມວ່າຖ້າວິສາຫະກິດ SMEs ທີ່ເປັນຂະໜາດກາງ ແລະ ເງິນລົງທຶນສູງຈະມີໂອກາດເຂົ້າເຖິງແຫຼ່ງເງິນທຶນຕ່ຳກວ່າວິສາຫະກິດຂະໜາດນ້ອຍ ແລະ ເງິນລົງທຶນລວມຕ່ຳ ເຫດຜົນກໍ່ຍ້ອນວ່າ: ເງິນທຶນທີ່ເຂົາເຈົ້າມີອາດຈະພຽງພໍຕໍ່ການລົງທຶນຢູ່ແລ້ວ ແລະ ອີງຢ່າງຖ້າຕ້ອງການກູ້ກໍ່ຕ້ອງກູ້ເງິນຂະໜາດໃຫຍ່ເຊິ່ງອາດຈະມີຜົນຕໍ່ການແບກຫາບພາລະດອກເບ້ຍສູງນຳທີ່ສູງເຖິງ 14-18% ຕໍ່ປີ. ດັ່ງນັ້ນຫົວໜ່ວຍທຸລະກິດເຫຼົ່ານີ້ອາກຈະບໍ່ທັນຈຳເປັນຕ້ອງກູ້ ແລະ ອີກທັງຊ່ວງເສດຖະກິດໃນປະຈຸບັນທີ່ຍັງບໍ່ທັນແນ່ນອນນີ້ອາດຈະເຮັດໃຫ້ເຂົາເຈົ້າບໍ່ຖ້າສຽງທີ່ຈະກູ້ເງິນກ້ອນໃຫຍ່ມາລົງທຶນ ອາດຈະລະມັດລະວັງໄວ້ກ່ອນເບິ່ງຈັງຫວະການປ່ຽນແປງຂອງເສດຖະກິດ. ສະນັ້ນຜົນການຄົ້ນຄວ້າຈຶ່ງພົບວ່າວິສາຫະກິດຂະໜາດກາງ ແລະ ມີເງິນທຶນຫຼາຍຈຶ່ງມີໂອກາດຈະມີໂອກາດເຂົ້າເຖິງແຫຼ່ງເງິນທຶນຕ່ຳກວ່າວິສາຫະກິດຂະໜາດນ້ອຍ 23.18 % ແລະ ເງິນລົງທຶນລວມຕ່ຳ 0.1173 %

ປັດໄຈຫົວໜ່ວຍທຸລະກິດທີ່ໄດ້ເຂົ້າເຖິງແຫຼ່ງເງິນທຶນ (L) ມີຄ່າສຳປະສິດເທົ່າກັບ 0.398 ສະແດງໃຫ້ເຫັນວ່າ: ຫົວໜ່ວຍທຸລະກິດທີ່ເຂົ້າເຖິງແຫຼ່ງເງິນທຶນ ຫຼືໄດ້ ກູ້ຢືມເງິນໃນການດຳເນີນກິດຈະການມີຜົນຕໍ່ຜົນກຳໄລຂອງກິດຈະການ ເມື່ອປຽບທຽບກັບຫົວໜ່ວຍທຸລະກິດທີ່ບໍ່ມີການກູ້ຢືມມີຄວາມສຳພັນທາງບວກຜົນການດຳເນີນງານຂອງວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດ

ກາງ ທີ່ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ເຊິ່ງສອດຄ່ອງກັບງານວິໄຈຂອງ Saidi, Uchenna et al. (2019) ທີ່ພົບວ່າສິນເຊື່ອຂອງທະນາຄານມີຄວາມສຳພັນຫຼາຍຕໍ່ກັບຜົນການດຳເນີນງານຂອງ SMEs ໂດຍສະເພາະແມ່ນການຂະຫຍາຍຕົວ ແລະ ການຜະລິດຂອງທຸລະກິດ SMEs ໃນ LAGOS ປະເທດໄນເຈເລຍ, ງານວິໄຈຂອງ Kanyare and Mungai (2017) ໄດ້ພົບວ່າໂຄງສ້າງສິນເຊື່ອຂອງທຸລະກິດນັ້ນມີຄວາມສຳພັນທາງບວກ ແລະ ມີຄວາມສຳຄັນທາງທາງສະຖິຕິຕໍ່ກັບຜົນການດຳເນີນງານທາງການເງິນຂອງ SMEs ໃນເຂດ Wajir County ປະເທດ ເຄນຢາ. ນອກນີ້ຍັງມີງານວິໄຈ ຂອງ Xiang and Worthington (2017) ຜົນກະທົບຂອງການຊ່ວຍເຫຼືອດ້ານການເງິນຂອງລັດຖະບານຕໍ່ ກັບຜົນການດຳເນີນງານຂອງກິດຈະການ ແລະການເງິນຂອງ SMEs ໃນປະເທດອົດສະຕາລີ. ແຕ່ຍັງມີງານວິໄຈຂອງ Cheong, Lee et al. (2020) ພົບວ່າການສະໜອງທຶນໜີ້ສິ່ງຜົນກະທົບທາງລົບຜົນການດຳເນີນງານຂອງ SMEໃນປະເທດ ມາເລເຊຍ ສາເຫດນ້ອງລະບົບໂຄງສ້າງທາງການເງິນຍັງບໍ່ ຈະແຈ້ງໃນການສະແດງຜົນການດຳເນີນງານຂອງກິດຈະການ. ສະຫລຸບແລ້ວ ຈາກຜົນການຄົ້ນຄວ້າທີ່ໄດ້ຮັບໃນຄັ້ງນີ້ ຜູ້ຄົ້ນຄວ້າເຊື່ອວ່າປັດໄຈຫົວໜ່ວຍທຸລະກິດທີ່ໄດ້ເຂົ້າເຖິງແຫຼ່ງເງິນທຶນແມ່ນປັດໄຈໜຶ່ງທີ່ຊ່ວຍເຮັດໃຫ້ຜົນການດຳເນີນງານຂອງວິສາຫະກິດການຜະລິດຂະຫນາດນ້ອຍ ແລະຂະຫນາດກາງ ຢູ່ແຂວງຈຳປາສັກ ສປປ ລາວ ເພື່ອວ່າການເຂົ້າເຖິງແຫຼ່ງເງິນທຶນນັ້ນທຸລະກິດຈະມີເງິນທຶນມາໃຊ້ຈ່າຍໃນການດຳເນີນກິດຈະການເພີ່ມຂຶ້ນທັງການຊື້ອຸປະກອນ ແລະ ວັດຖຸດິບຕ່າງໆເຊິ່ງເປັນການດີ. ແຕ່ເຖິງຢ່າງໃດກໍ່ຕາມ ການການເງິນມາລົງທຶນນັ້ນກໍ່ ຈະຕ້ອງວາງແຜນການໃຊ້ຈ່າຍໃຫ້ຈະແຈ້ງ, ການກູ້ຢືມແມ່ນຈຸດປະສົງເພື່ອການຂະຫຍາຍກິດຈະການ ແລະ ເພີ່ມເງິນທຶນທີ່ຈຳເປັນໃຫ້ຖືກຕາມແຜນທີ່ວາງໄວ້ເພື່ອຈະໃຫ້ປະສິດທິພາບທີ່ສຸດ ທັງນີ້ກໍ່ຕ້ອງຂຶ້ນກັບຜູ້ປະກອບການເອງຈຕ້ອງໄດ້ປະຕິບັດຢ່າງເຂັ້ມງວດໃນວິໃນການເງິນບໍ່ດັ່ງນັ້ນການກູ້ຢືມເງິນອາດຈະເປັນກໍ່ບັນຫາໃຫ້ແກ່ທຸລະກິດຕົນເອງ ຢ່າລືມວ່າຈະຕ້ອງສົ່ງຄືນຜູ້ທີ່ໃຫ້ກູ້ຢືມມາລົງທຶນ ແລະ ອີກທັງຜູ້ປະກອບການກໍ່ຍັງຈະລວມເຂົ້າກັບປັດໃຈອື່ນໆເພື່ອໃຫ້ໄດ້ຜົນການດຳເນີນງານທີ່ດີ ແລະ ຕ້ອງຜ່ານນຳໃຊ້ໃຫ້ແທດເໝາະກັບສະພາບຕົວຈິງ ເພື່ອໃຫ້ແທດເໝາະກັບທຸລະກິດໃນປະຈຸບັນ.

ປັດໄຈຄວາມຮູ້ຂອງເຈົ້າຂອງທຸລະກິດທີ່ຮຽນຈົບ ຫຼື ໄດ້ຮັບການເຝິກອົບຮົມໂດຍມີໃບປະກາດສະນີຍະບັດໃນສາຂາກ່ຽວກັບການບໍລິຫານທຸລະກິດ, ຜົນການວິໄຈພົບວ່າຕົວປ່ຽນ ຄວາມຮູ້ທີ່ກ່ຽວຂ້ອງກັບສາຂາບໍລິຫານທຸລະກິດ ມີຄ່າສຳປະສິດເທົ່າກັບ 1.249 ສະແດງໃຫ້ເຫັນວ່າເຈົ້າຂອງທຸລະກິດມີຄວາມຮູ້ໃນສາຂາທີ່ກ່ຽວຂ້ອງກັບບໍລິຫານທຸລະກິດ ມີຄວາມສຳພັນທາງບວກຜົນການດຳເນີນງານຂອງວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99%, ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Barkham (1994) ກ່ຽວກັບຄຸນລັກສະນະຂອງເຈົ້າຂອງທຸລະກິດ ແລະ ທຸລະກິດໃຫມ່ໄດ້ກ່າວວ່າປັດໄຈລະດັບການສຶກສາ ແລະ ທັກສະຂອງເຈົ້າຂອງທຸລະກິດທີ່ມີຄວາມຮູ້ດ້ານການບໍລິຫານທຸລະກິດແມ່ນກ່ຽວຂ້ອງກັບການປະຕິບັດຂອງບໍລິສັດໃຫມ່ ໃນສະຫະຣາດອານາຈັກ ມີຄວາມສຳຄັນທາງສະຖິຕິໃນລະດັບ ທີ່ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ແລະ ການຄົ້ນຄວ້າໂດຍ Jasra et al. (2011) ໄດ້ຊີ້ໃຫ້ເຫັນວ່າທັກສະ ແລະ ຄວາມຮູ້ຂອງຜູ້ປະກອບການແມ່ນມີຄວາມກ່ຽວຂ້ອງໃນທາງບວກກັບຄວາມສຳເລັດຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃນປະເທດປາກິສະຖານ. ທີ່ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 95% ແລະ ສອກຄ່ອງກັບການຄົ້ນຄວ້າຂອງ Kyophilavong et al. (2014) ທີ່

ເຮັດການຄົ້ນຄວ້າກ່ຽວກັບປັດໃຈທີ່ມີຜົນຕໍ່ການດໍາເນີນງານວິສາຫະກິດຂະໜາດນ້ອຍ ແລະ ກາງໃນ ສປປ ລາວ ພົບວ່າ ເຈົ້າຂອງທຸລະກິດທີ່ໄດ້ຮັບການຝຶກອົບຮົມ ແລະ ການພັດທະນາຄວາມຮູ້ດ້ານການບໍລິຫານທຸລະກິດກ່ອນການດໍາເນີນທຸລະກິດ ມີຜົນກະທົບຕໍ່ກັບການການດໍາເນີນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃນ ສປປ ລາວ, ສະແດງໃຫ້ເຫັນວ່າ ຄວາມຮູ້ທາງດ້ານວິຊາສະເພາະທາງດ້ານການບໍລິຫານທຸລະກິດຂອງເຈົ້າຂອງວິສາຫະກິດການຜະລິດຂະໜາດນ້ອຍແລະ ຂະໜາດກາງ ຢູ່ແຂວງຈໍາປາສັກ, ສປປ ລາວ ເປັນປັດໄຈສໍາຄັນເພື່ອເປີດໂອກາດໃຫ້ການປະຕິບັດໜ້າທີ່ຂອງວິສາຫະກິດຂະໜາດກາງ, ນ້ອຍ ແລະ ຈຸລະພາກ ໄດ້ຮັບການປັບປຸງ. ສະຫລຸບແລ້ວ ຈາກຜົນການຄົ້ນຄວ້າທີ່ໄດ້ຮັບໃນຄັ້ງນີ້ ຜູ້ຄົ້ນຄວ້າເຊື່ອວ່າຄວາມຮູ້ກ່ຽວກັບວິຊາເສດຖະກິດ ແລະ ການບໍລິຫານທຸລະກິດຂອງເຈົ້າຂອງທຸລະກິດແມ່ນປັດໃຈໜຶ່ງທີ່ຊ່ວຍເຮັດໃຫ້ຜົນການດໍາເນີນງານຂອງວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຈໍາປາສັກ ສປປ ລາວ. ແຕ່ເຖິງຢ່າງໃດກໍ່ຕາມ, ຈາກຄວາມຮູ້ຂອງສາຂາທີ່ກ່ຽວຂ້ອງກັບການບໍລິຫານທຸລະກິດຂອງເຈົ້າຂອງທຸລະກິດຍັງຈະລວມເຂົ້າກັບປັດໃຈອື່ນໆຫຼາຍຍ້ອນຄວາມຮູ້ທີ່ໄດ້ຮຽນຮູ້ ຫຼື ການຝຶກອົບຮົມອາດຈະຖືກນໍາໃຊ້ເປັນບາງສ່ວນເທົ່ານັ້ນ ແລະ ຕ້ອງຜ່ານນໍາໃຊ້ໃຫ້ແທດເໝາະກັບສະພາບຕົວຈິງ ເພື່ອໃຫ້ແທດເໝາະກັບທຸລະກິດໃນປະຈຸບັນ.

ປັດໄຈວິສາຫະກິດການຜະລິດຂະໜາດກາງທຽບກັບວິສາຫະກິດຂະໜາດນ້ອຍ ຜົນຂອງການສຶກສາຄົ້ນຄວ້າພົບວ່າ ປັດໄຈວິສາຫະກິດຂະໜາດກາງ ມີຄ່າສໍາປະສິດເທົ່າກັບ 0.881 ສະແດງໃຫ້ເຫັນວ່າປັດໄຈວິສາຫະກິດຂະໜາດກາງ ມີຄວາມສໍາພັນທາງບວກກັບຜົນການດໍາເນີນງານຂອງວິສາຫະກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 95% ເຊິ່ງກົງກັບຜົນການຄົ້ນຄວ້າຂອງ Wenyi (2009) ທີ່ສຶກສາຜົນກະທົບຂອງເຈົ້າຂອງທຸລະກິດຄອບຄົວ ມັນມີຜົນກະທົບ ກ່ຽວກັບການເຄື່ອນໄຫວຂອງວິສາຫະກິດ SME ໃນໄຕ້ຫວັນໄດ້ພົບເຫັນວ່າຂະໜາດຂອງວິສາຫະກິດ SME ມີການພົວພັນທາງບວກກັບຜົນການດໍາເນີນງານຂອງວິສາຫະກິດທີ່ມີຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 95% ແລະສອດຄ່ອງກັບການຄົ້ນຄວ້າຂອງ Kalleberg ແລະ Leicht (1991) .ທີ່ໄດ້ຊີ້ໃຫ້ເຫັນວ່າຂະໜາດຂອງວິສາຫະກິດ ມີຄວາມສໍາພັນທາງບວກກັບການປະຕິບັດຂອງທຸລະກິດຂະໜາດນ້ອຍໃນລັດ Indiana ບ່ອນທີ່ເພດຂອງຜູ້ປະກອບການແລະການປະຕິບັດໄດ້ຖືກສຶກສາ. ແຕ່ຍັງມີການຄົ້ນຄ້ວາຢູ່ຕ່າງປະເທດທີ່ຜົນໄດ້ຮັບໄດ້ພົບເຫັນວ່າຂະໜາດຂອງວິສາຫະກິດມີຄວາມສໍາພັນທາງລົບກັບການປະຕິບັດງານຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ທັງນີ້ກໍຍ້ອນວ່າການກໍານົດຂະໜາດຂອງວິສາຫະກິດມີຄວາມແຕກຕ່າງກັນ, ອີງໃສ່ມາດຖານການກໍານົດຂະໜາດວິສາຫະກິດ, ແຕ່ແຕກຕ່າງກັນເພື່ອກໍານົດຕົວແປທີ່ເປັນປັດໃຈຂະໜາດຂອງວິສາຫະກິດ ເຊັ່ນ: ແຮງງານ , ຊັບສິນ ແລະ ມູນຄ່າລາຍຮັບຂອງວິສາຫະກິດ ດັ່ງນັ້ນ, ຜົນໄດ້ຮັບຂອງການສຶກສາອອກມາແຕກຕ່າງກັນ ແຕ່ນັກຄົ້ນຄ້ວາຍັງຖືວ່າຂະໜາດຂອງວິສາຫະກິດຂະໜາດກາງນີ້ແມ່ນປັດໄຈສໍາຄັນທີ່ສົ່ງຜົນສະທ້ອນເຖິງຜົນການດໍາເນີນງານ. ທັງນີ້ກໍຍ້ອນວ່າວິສາຫະກິດທີ່ມີຂະໜາດໃຫຍ່ກວ່າຈະມີກໍາລັງແຮງງານ , ຊັບສິນ ແລະ ລາຍຮັບທີ່ໃຫຍ່ກວ່າ ແລະ ມີລະບົບການຄຸ້ມຄອງບໍລິຫານການວາງແຜນທີ່ດີຂຶ້ນ ແລະ ມີຄວາມສາມາດຂະຫຍາຍການຜະລິດຜະລິດຕະພັນ ແລະ ສະໜອງການບໍລິການຫຼາຍກ່ວາວິສາຫະກິດຂະໜາດນ້ອຍ ຈຶ່ງເຮັດໃຫ້ມີກໍາໄລຫຼາຍກວ່າວິສາຫະກິດທີ່ມີຜົນໄດ້ຮັບການດໍາເນີນງານດີກວ່າວິສາຫະກິດຂະໜາດນ້ອຍ. ແຕ່ຢ່າງໃດກໍຕາມວິສາຫະກິດຂະໜາດກາງ ນັ້ນ ມັນເປັນວິສາຫະກິດທີ່ໃຊ້ຄ່າໃຊ້ຈ່າຍສູງບວກແຮງງານຫຼາຍ ມີຄວາມສ່ຽງສູງ. ທ່ານຄວນອີງໃສ່ປັດໃຈອື່ນໆຈໍານວນຫຼາຍເພື່ອວາງແຜນການດໍາເນີນທຸລະກິດຂອງທ່ານເພື່ອຄວາມຍືນຍົງໃນອະນາຄົດ. ທັງໃນແງ່ຂອງຜົນການດໍາເນີນງານ ແລະການແຂ່ງຂັນທີ່ຈະເກີດຂຶ້ ເຈົ້າຂອງທຸລະກິດ

ຄວນຮຽນຮູ້ການວາງແຜນ ແລະສຶກສາຂໍ້ມູນຈາກແຫຼ່ງຕ່າງໆ. ເພື່ອປັບປຸງຂະບວນການຜະລິດ ແລະ ການວາງແຜນການຂາຍ, ແຜນຍຸດທະສາດທຸລະກິດ ເພື່ອນຳໄປໝູນໃຊ້ໃຫ້ແທດເໝາະກັບສະພາບຕົວຈິງ ໃຫ້ແທດເໝາະກັບວິສາຫະກິດໃນ ສປປ ລາວ ແລະ ສາມາດສ້າງຄວາມໄດ້ປຽບໃນການແຂ່ງຂັນ

## 7. ສະຫຼຸບຜົນ

ຜົນການວິເຄາະ ປັດໄຈທີ່ມີຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນຂອງວິສະຫາກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ ໄດ້ແກ່: ປັດໄຈລະດັບການສຶກສາສູງສຸດຂອງເຈົ້າຂອງກິດຈະການທີ່ຈົບລະດັບວິຊາຊີບຂຶ້ນໄປ, ປັດໄຈລະດັບການສຶກສາສູງສຸດຂອງເຈົ້າຂອງກິດຈະການທີ່ຈົບລະດັບວິຊາຊີບຂຶ້ນໄປ, ປັດໄຈປະສົບການຂອງເຈົ້າຂອງກິດຈະການທີ່ເຄີຍເຮັດທຸລະກິດຜ່ານມາ, ປັດໄຈຫົວໜ່ວຍທຸລະກິດຂະໜາດກາງ, ປັດໄຈຫົວໜ່ວຍທຸລະກິດມີແຜນທຸລະກິດໃນການດຳເນີນກິດຈະການ, ປັດໄຈຕົ້ນທຶນລວມຂອງຫົວໜ່ວຍທຸລະກິດ, ປັດໄຈລາຍຮັບສະເລ່ຍຕໍ່ປີຂອງຫົວໜ່ວຍທຸລະກິດ ແລະ ຂະໜາດແຮງງານຂອງຫົວໜ່ວຍກິດຈະການ ເຊິ່ງຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມສຳຄັນທາງສະຖິຕິໃນລະດັບ 90 % ຂຶ້ນໄປ.

ຜົນກະທົບຂອງການເຂົ້າແຫຼ່ງເງິນທຶນຕໍ່ຜົນການດຳເນີນງານຂອງວິສະຫາກິດການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນແຂວງ ຈຳປາສັກ ໄດ້ແກ່: ປັດໄຈຫົວ ໜ່ວຍທຸລະກິດທີ່ໄດ້ກູ້ຢືມເງິນ, ປັດໄຈສັນຊາດຂອງຜູ້ປະກອບການເປັນຄົນລາວ, ປັດໄຈຜູ້ປະກອບການມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດປັດໄຈອາຍຸຂອງກິດຈະ ການທີ່ດຳເນີນຢູ່, ປັດໄຈຫົວໜ່ວຍທຸລະກິດຂະໜາດກາງ, ປັດໄຈຫົວໜ່ວຍທຸລະກິດມີແຜນທຸລະກິດໃນການດຳ ເນີນກິດຈະການ, ປັດໄຈຕົ້ນທຶນລວມຂອງຫົວໜ່ວຍທຸລະກິດໃນການດຳເນີນກິດຈະການ ແລະ ປັດໄຈຫົວໜ່ວຍທຸລະກິດທີ່ໃຊ້ສື່ອອນໄລໃນການຊ່ວຍຈຳໜ່າຍສິນຄ້າ ເຊິ່ງຜ່ານການທົດສອບໃນທາງສະຖິຕິດ້ວຍລະດັບຄວາມສຳຄັນທາງສະຖິຕິໃນລະດັບ 90 % ຂຶ້ນໄປ.

## 6. ເອກະສານອ້າງອີງ


Azadegan, A., Patel, P. C. & Parida, V. 2013. Operational slack and venture survival. Production and Operations Management, 22(1), 1-18.

Bello, O. F., & Mustapha, Y. I. (2021). Determinants of access to finance among manufacturing micro, small and medium enterprises in Nigeria. Kelaniya Journal of Management, 10(1), 65.

Ciliberti, F., De Haan, J., De Groot, G. & Pontrandolfo, P. 2011. CSR codes and the principal-agent problem in supply chains: four case studies. **Journal of Cleaner Production**, 19(8), 885-894.

Driouach, L., Zarbane, K. & Beidouri, Z. 2019. Literature review of Lean manufacturing in small and medium-sized enterprises.

Gancarczyk, M. & Gancarczyk, J. 2018. Proactive international strategies of cluster SMEs. **European Management Journal**, 36(1), 59-70.

Genc, E., Dayan, M. & Genc, O. F. 2019. The impact of SME internationalization on innovation: The mediating role of market and entrepreneurial orientation. **Industrial Marketing Management**, 82(253-264.

Kyophilavong, P. (2011). SMEs access to finance: Evidence from Laos. Small and Medium Enterprises (SMEs) Access to Finance in Selected East Asian Economies, 117-150.

Ndungu, C. (2016). Factors affecting credit access among small and medium enterprises in Murang'a County (Doctoral dissertation, University of Nairobi).

Ogubazghi, S. K., & Muturi, W. (2014). The effect of age and educational level of owner/managers on SMMEs' access

to bank loan in Eritrea: evidence from Asmara City. American journal of industrial and business management, 4(11), 632.

Pham, H. D. 2017. Determinants of new small and medium enterprises (SMEs) access to bank credit: Case study in the Phu Tho Province, Vietnam. **International Journal of Business and Management**, 12(7), 83-99.

Pisani, N., Caldart, A. & Hopma, J. 2017. SMEs' formation of minority international joint ventures and level of internationalization: The moderating role of a global versus regional focus. **European Management Journal**, 35(3), 414-424.

Rosenbusch, N., Brinckmann, J. & Bausch, A. 2011. Is innovation always beneficial? A meta-analysis of the relationship between innovation and performance in SMEs. Journal of business Venturing, 26(4), 441-457.Ryan, R. M., O'Toole, C. M. & McCann, F. 2014. Does bank market power affect SME financing constraints? **Journal of Banking & Finance**, 49(495-505.

SENGDALA, C., & Pheng, H. E. R. (2022). Determinants of Access to Finance for SMEs: Evidence of Sayaboury Province, Lao PDR. sujournal, 8(1), 59-66.

Srithirath, V., & Sukcharoensin, P. (2022). Financial Literacy, Asymmetric Information, and Credit Accessibility: Case Study of SMEs in the Lao PDR. Development Economic Review, 16(1).

Saunila, M. 2020. Innovation capability in SMEs: A systematic review of the literature. **Journal of Innovation & Knowledge**, 5(4), 260-265.

Xiang, D. & Worthington, A. C. 2017. The impact of government financial assistance on the performance and financing of Australian SMEs. **Accounting Research Journal**.

Yamane, T. (1967). Statistics, An Introductory Analysis, 2th Ed., New York: Harper and Row.